ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 104 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 10 APR 2019

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອໍານວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປະຈໍາປີ 2019

- ອີງຕາມກົດລະບຽບຂອງ ສຄຄຊ ວ່າດ້ວຍ: ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 004/ສສຄ ລົງວັນທີ 28 ມັງກອນ ປີ 2019,
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈໍາປີ 2019 ວັນທີ 10 ເມສາ 2019 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງມື້ປິດປຶ້ມວັນທີ 19 ເມສາ 2019 ເພື່ອກໍານົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະຮັບເງິນປັນຜົນ ປະຈໍາປີ 2018 ແລະ ກໍານົດເອົາວັນທີ 30 ເມສາ 2019 ເປັນມື້ຈັດກອງປະຊຸມ.
2. ພິຈາລະນາ ແລະ ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ປະຈໍາປີ 2018 ເຊິ່ງມີລາຍລະອຽດດັ່ງນີ້:

   ວາລະທີ 1 : ພິຈາລະນາ ແລະ ຮັບຮອງມະຕິກອງປະຊຸມຜູ້ຖືຮຸ້ນ ປະຈໍາປີ 2017

   ວາລະທີ 2 : ພິຈາລະນາ ແລະ ຮັບຮອງຄະນະກໍາມະການຄັດເລືອກ, ຄະນະກໍາມະການບໍລິຫານຄວາມ ສ່ຽງ ແລະ ຄະນະກໍາມະການກວດສອບລາຍການທີ່ກ່ຽວພັນ.

   ວາລະທີ 3 : ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການດໍາເນີນທຸລະກິດປະຈໍາປີ 2018;

   ວາລະທີ 4 : ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນປີ 2018;

   ວາລະທີ 5 : ພິຈາລະນາ ແລະ ຮັບຮອງການອະນຸມັດຈ່າຍເງິນປັນຜົນປີ 2018;

ວາລະທີ 6 : ພິຈາລະນາ ແລະ ຮັບຮອງແຜນດຳເນີນທຸລະກິດ ແລະ ແຜນງົບປະມານການເງິນປະຈຳປີ 2019.

ວາລະທີ 7 : ພິຈາລະນາ ແລະຮັບຮອງບໍລິສັດກວດສອບ EY ເປັນຜູ້ກວດສອບພາຍນອກ ປະຈຳປີ 2019 ມູນຄ່າ 31,600 ໂດລາ (ສາມສິບເອັດພັນຫົກຮ້ອຍໂດລາ).

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ,

ດ້ວຍຄວາມນັບຖືຢ່າງສູງ,

ບໍລິສັດ ຊີມັງລາວ ມະຫາຊົນ

ປະທານສະພາບໍລິຫານ

ຫຼີວເຫວີຍ